**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 416 /ອຊ

ນະຄອນຫລວງວຽງຈັນ, ວັນທີ 5 ເມສາ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

ເຖິງ: ບັນດາບໍລິສັດພາຫະນະຂົນສົ່ງ

ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນຈັດຈ້າງລົດຕູ້ສໍາລັບຄະນະຜູ້ແທນທີ່ຈະມາເຂົ້າຮ່ວມກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ທີ່ ນະຄອນຫຼວງວຽງຈັນ.

- ອີງຕາມການເຫັນດີຂອງ ຄະນະນໍາກະຊວງການຕ່າງປະເທດ ລົງວັນທີ 27 ມີນາ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີປະສົບປະການດ້ານການບໍລິການລົດຕູ້ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງ ພາຫະນະ (ລົດຕູ້) ສໍາລັບຄະນະຜູ້ແທນ 27 ປະເທດທີ່ຈະມາຮ່ວມກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 3-9 ມິຖຸນາ 2024 ທີ່ ນະຄອນຫຼວງວຽງຈັນ.

ການປະມູນຈະດໍາເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 8 ເມສາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 09:00 ໂມງ ຂອງວັນທີ 29 ເມສາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນທີ 29 ເມສາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ກະຊວງການຕ່າງປະເທດ ກົມອາຊຽນ

ລິດສັງຄົມ ສີສະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 415 /ອຊ

ນະຄອນຫລວງວຽງຈັນ, ວັນທີ 5 ເມສາ 2024

## ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນເຊົ່າພາຫະນະ (ລົດຕູ້) ສໍາລັບຄະນະຜູ້ແທນ 27 ປະເທດທີ່ຈະມາຮ່ວມກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 3-9 ມິຖຸນາ 2024 ທີ່ ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊໍາລະອາກອນທີ່ໃຊ້ໄດ້ເຖິງສົກປີ 2024 ຫຼື 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສຳຮອງຈາກທະນາຄານ);
6. ຕ້ອງມີເງິນຄໍ້າຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງປະສົບການດ້ານນີ້ ຢ່າງໜ້ອຍ 02 ປີ ແລະ ມີຈຳນວນລົດພຽງພໍ;
8. ບໍລິສັດຕ້ອງສະໜອງລົດຕູ້ Toyota Hiace ພ້ອມດ້ວຍຄົນຂັບລົດ ຈຳນວນ 27 ຄັນ, ລົດທຸກຄັນຕ້ອງມີປະກັນໄພຢ່າງຈະແຈ້ງ ແລະ ມີຄວາມພ້ອມເລີ່ມວຽກແຕ່ວັນທີ 3 ມິຖຸນາ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ່ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ກະຊວງການຕ່າງປະເທດ ກົມອາຊຽນ

ສົດສັງຄົມ ສີສະເກດ